ບົດອອກຂ່າວ

# ບໍລິສັດ MMG ລ້ານຊ້າງ ມີເນໂຣນສ໌ ລິມິເຕັດ ສະໜັບສະໜູນ ວຽກງານຕິດຕາມສິ່ງແວດລ້ອມໃນ ສປປ ລາວ

16 ມັງກອນ 2018

ໃນວັນທີ 12 ມັງກອນ 2017, ບໍລິສັດ MMG ລ້ານຊ້າງ ມີເນໂຣນສ໌ ລິມິເຕັດ (LXML) ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ (Memorandum of Understanding ຫຼື MoU) ຮ່ວມກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບການສະໜັບສະໜູນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານຄຸ້ມຄອງສິ່ງແວດລ້ອມຂອງກະຊວງ ແລະ ການສ້າງຕັ້ງຫ້ອງການຂອງໜ່ວຍງານດັ່ງກ່າວ ປະຈຳໂຄງການຂຸດຄົ້ນຄຳ-ທອງເຊໂປນ ທີ່ ເມືອງວິລະບູລີ, ແຂວງ ສະຫວັນນະເຂດ.

ການຮ່ວມມື ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ສະບັບນີ້ ຈະສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານຄຸ້ມຄອງສິ່ງແວດລ້ອມຂອງກະຊວງໃນວຽກງານຄຸ້ມຄອງສິ່ງແວດລ້ອມພາຍໃນຂະແໜງການຊັບພະຍາກອນ. ໃນນັ້ນ, ພະນັກງານລັດຖະບານ ທີ່ໄດ້ຖືກແຕ່ງຕັ້ງມາເຮັດວຽກກັບກອງຄຸ້ມຄອງສິ່ງແວດລ້ອມ ຈະມີໂອກາດໄດ້ເຂົ້າຮ່ວມແຜນງານສ້າງຄວາມອາດສາມາດ ກໍຄື ການຝຶກອົບຮົມທີ່ກ່ຽວຂ້ອງກັບການຄຸ້ມຄອງສິ່ງແວດລ້ອມ ທີ່ບໍ່ຄຳ-ທອງເຊໂປນ, ພ້ອມທັງໃຫ້ສາມາດ ໝູນໃຊ້ປະສົບການ ແລະ ຄວາມຮູ້ດັ່ງກ່າວ ເຂົ້າໃນວຽກງານຕິດຕາມໂຄງການຂຸດຄົ້ນບໍ່ແຮ່ອື່ນໆ ໃນ ສປປ ລາວ.

ນັບຕັ້ງແຕ່ໂຄງການບໍ່ຄຳ-ທອງເຊໂປນໄດ້ເລີ່ມມີການດຳເນີນງານໃນປີ 2003, ບໍລິສັດ LXML ກໍໄດ້ສະແດງໃຫ້ເຫັນຢ່າງສະເໝີຕົ້ນສະເໝີປາຍວ່າ ບໍລິສັດໄດ້ເປັນເຈົ້າການ ແລະ ເປັນແບບຢ່າງທີ່ນຳໜ້າ ໃນດ້ານວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ການປະຕິບັດຕາມມາດຕະຖານສາກົນ ໃນ  ສປປ ລາວ ກໍຄື ໄດ້ ຮັບກຽດຕິບັດການປະຕິບັດງານຄຸນນະພາບລະດັບ A+ ຈາກ ກະຊວງພະລັງງານ ແລະ ບໍ່ແຮ່ຂອງ ສປປ ລາວ.

ໃຫ້ກຽດລົງນາມໃນບົດບັນທຶກຄວາມເຂົ້າໃຈດັ່ງກ່າວ ມີ: ທ່ານ ລັດສະໝີ ວໍລະລາດ, ຮອງຫົວໜ້າ ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງ ກະຊວງຊັບພະຍາກອນທຳທະຊາດ ແລະ ສິ່ງແວດລ້ອມ ແລະ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ແລະ ຜູ້ຈັດການ ຝ່າຍການພົວພັນກັບຜູ້ມີສ່ວນຮ່ວມ ຂອງບໍລິສັດ LXML.

**ທ່ານ ລັດສະໝີ ວໍລະລາດ, ຮອງຫົວໜ້າ, ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ກ່າວວ່າ:** "ໃນຂະນະທີ່ ສປປ ລາວ ໄດ້ມີການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ການສ້າງຄວາມອາດສາມາດໃນການຄຸ້ມຄອງສິ່ງແວດລ້ອມທີ່ຕິດພັນກັບການພັດທະນາຂະແໜງການບໍ່ແຮ່ ແມ່ນມີຄວາມສຳຄັນຫຼາຍ. ຂ້າພະເຈົ້າມີຄວາມເຊື່ອໝັ້ນວ່າ ການຮ່ວມມືຄັ້ງນີ້ ຈະຮັບປະກັນໃຫ້ພວກເຮົາມີປະສົບການທີ່ຕ້ອງການໃນການຄຸ້ມຄອງ ແລະ ຕິດຕາມສິ່ງແວດລ້ອມ ຕະຫຼອດໄລຍະການສຳຫຼວດ-ຂຸດຄົ້ນ-ຜະລິດ ແລະ ພາຍຫຼັງການປິດບໍ່."

**ທ່ານ ສະໝານ ອະເນກາ, ຜູ້ບໍລິຫານໃຫຍ່ ແລະ ຜູ້ຈັດການຝ່າຍການພົວພັນກັບຜູ້ມີສ່ວນຮ່ວມຂອງ MMG LXML ເຊໂປນ ໄດ້ກ່າວວ່າ:** "ທີ່ MMG ພວກເຮົາຂຸດຄົ້ນແຮ່ເພື່ອຄວາມກ້າວໜ້າ ໂດຍຮັບປະກັນວ່າ ການດຳເນີນງານຂອງບໍລິສັດແມ່ນສອດຄ່ອງກັບມາດຕະຖານສາກົນ ແລະ ປະກອບສ່ວນຕໍ່ການເສີມສ້າງຄວາມອາດສາມາດຂອງບຸກຄະລາກອນ ທີ່ເປັນຄົນລາວ ກໍຄື ຊຸມຊົນເຈົ້າພາບທີ່ບໍລິສັດດຳເນີນງານຢູ່. ຜ່ານການຮ່ວມມືກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບໍລິສັດຫວັງວ່າ ປະ

ຊາຊົນຊາວເມືອງວິລະບູລີ ເກືອບ 40.000 ຄົນ ຈະຖືກປົກປ້ອງ, ຮັບຮູ້ກ່ຽວກັບ ວິທີການຮັບມືກັບບັນຫາດ້ານສິ່ງແວດລ້ອມ, ສະໜັບສະໜູນໂຄງການຂອງບໍລິສັດ ກໍຄື ມີຊີວິດການເປັນຢູ່ທີ່ດີຂຶ້ນເລື້ອຍໆ.”

MMG LXML ເຊໂປນ ເປັນ ສະມາຊິກຂອງ ສະພາບໍ່ແຮ່ ແລະ ໂລຫະສາກົນ (Council on Mining and Metals ຫຼື ICMM) ຊຶ່ງເປັນ ອົງການສາກົນປະກອບດ້ວຍ ບໍລິສັດບໍ່ແຮ່ ແລະ ໂລຫະ 25 ບໍລິສັດ ທີ່ ມຸ່ງໝັ້ນ ຕໍ່ ອຸດສາຫະກໍາບໍ່ແຮ່ ທີ່ປອດໄພ, ຍຸດຕິທໍາ ແລະ ຍືນຍົງ.

**(ຈົບ)**





ໃຫ້ກຽດລົງນາມ ບົດບັນທຶກຄວາມເຂົ້າໃຈດັ່ງກ່າວ ມີ: ທ່ານ ລັດສະໝີ ວໍລະລາດ, ຮອງຫົວໜ້າ ກອງຕິດຕາມກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງ ກະຊວງຊັບພະຍາກອນທຳທະຊາດ ແລະ ສິ່ງແວດລ້ອມ ແລະ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ແລະ ຜູ້ຈັດການ ຝ່າຍການພົວພັນກັບຜູ້ມີສ່ວນຮ່ວມ ຂອງບໍລິສັດ LXML ໃນວັນທີ 12 ມັງກອນ 2018 ທີ່ ນະຄອນຫຼວງວຽງຈັນ, ສປປ ລາວ.


<u>**ຂໍ້ມູນເພີ່ມເຕີມ**</u>

**ກະລຸນາຕິດຕໍ່ ທ່ານ ສອນປະເສີດ ນີຣັດໃສ,**

**ຫົວໜ້າສື່ສານ ແລະ ປະຊາສຳພັນ.**

ໂທ: 856 21 268 408,

ແຟກສ໌: 856 21 268 001,

ມືຖື: 856 20 2999 6461

ອີ-ເມວ: sonepraseuth.niradsay@mmg.com,

ເວບໄຊທ໌ ທີ່: www.mmg.com